ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະເລຂາທິການສູນກາງພັກ

ເລກທີ...190...../ຄລສພ

ນະຄອນຫຼວງວຽງຈັນ, ວັນທີ29/09/...2021

# ຄຳສັ່ງ

## ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ
## ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ

**ເຖິງ:** ຄະນະປະຈຳພັກກະຊວງ-ອົງການ, ນະຄອນຫຼວງ ແລະ ບັນດາແຂວງ ໃນທົ່ວປະເທດ.

- ອີງຕາມ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ;
- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI, ໝວດທີ III, ມາດຕາ 19;
- ອີງຕາມ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 07/ກມສພ, ລົງວັນທີ 25 ກຸມພາ 2021 ວ່າດ້ວຍການປັບປຸງສັບຊ້ອນບາງວຽກງານ ຂອງລັດຖະບານ.

ພັກເຮົາ, ຍາມໃດ ກໍຖືວຽກງານກໍ່ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງ ທົ່ວລະບົບການເມືອງແມ່ນວຽກງານໜຶ່ງທີ່ສຳຄັນຂອງພັກເຮົາ ໃນຖານະທີ່ເປັນພັກກຳອຳນາດ ດ້ວຍການກຳນົດແນວທາງ, ນະໂຍບາຍກ່ຽວກັບການປັບປຸງກົງຈັກການຈັດຕັ້ງ ໃຫ້ສອດຄ່ອງ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະ ການເຊື່ອມໂຍງກັບບັນດາປະເທດໃນພາກພື້ນ ແລະ ສາກົນ; ໃນໄລຍະຜ່ານມາ ສູນກາງພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາ ການປັບປຸງກົງຈັກການຈັດຕັ້ງ ຂອງບັນດາ ກະຊວງ- ອົງການ ແລະ ທ້ອງຖິ່ນ ໃຫ້ກະທັດຮັດ, ສົມເຫດສົມຜົນ ຕິດພັນກັບການກຳນົດຕຳແໜ່ງງານ ແລະ ຮັບປະກັນການປະຕິບັດໜ້າທີ່ການເມືອງ ໃນໄລຍະໃໝ່ ດີສົມຄວນ. ເຖິງຢ່າງໃດກໍ່ຕາມ, ມາຮອດປັດຈຸບັນ ເຫັນວ່າ ການປັບປຸງກົງຈັກໃນລະບົບການເມືອງ ຍັງມີຫຼາຍດ້ານທີ່ຈະຕ້ອງສືບຕໍ່ ປັບປຸງ, ແກ້ໄຂ ໃຫ້ຂາດຕົວ ເປັນຕົ້ນ ການຊໍ້າຊ້ອນດ້ານພາລະບົດບາດ ແລະ ກົງຈັກໃຫຍ່ໂຕ, ມີຫຼາຍຂອດບໍລິຫານ, ຫຼາຍສາຍງານ ທີ່ບໍ່ຈຳເປັນ ຍັງເປັນອັນແຜ່ຫຼາຍ ແລະ ຈຳນວນພະນັກງານ-ລັດຖະກອນ ຍັງກວມອັດຕາສ່ວນສູງ ຖ້າທຽບໃສ່ພົນລະເມືອງ ແລະ ບຸ່ມບາງ ຊີ້ເຂດມີລັກສະນະເຫຼືອບໍ່ພໍ; ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ຕາມທິດມອບວຽກ, ມອບສິດ ແລະ ຄວາມຮັບຜິດຊອບ ເພື່ອເສີມຂະຫຍາຍຄວາມເປັນເຈົ້າການປະດິດສ້າງ ໃຫ້ທ້ອງຖິ່ນ, ການບໍລິການຮັບໃຊ້ປະຊາຊົນ ຍັງບໍ່ທັນໄດ້ດີ, ສັງຄົມ ມີການຈົ່ມວ່າ ຕໍ່ການບໍລິຫານລັດຂອງພວກເຮົາ. ເພື່ອໃຫ້ການປັບປຸງກົງຈັກການຈັດຕັ້ງ ໃນທົ່ວລະບົບການເມືອງ ດຳເນີນໄປຖືກຕ້ອງຕາມທິດກະທັດຮັດ ແລະ ສອດຄ່ອງກັບສະພາບຕົວຈິງ, ຂະແໜງໜຶ່ງໃຫ້ຮັບຜິດຊອບຫຼາຍວຽກ, ວຽກໃດຄ້າຍຄືກັນ ໃຫ້ໂຮມເຂົ້າກັນ ເຮັດໃຫ້ຂະໜາດຂອງກົງຈັກ ບໍ່ໃຫຍ່ໂຕ, ການຈັດຕັ້ງ ມີຄວາມໜັກແໜ້ນ, ເຂັ້ມແຂງ, ລັດຖະກອນ

7. ໃຫ້ຄະນະພັກ ບັນດາກະຊວງ-ອົງການ, ນະຄອນຫຼວງ ແລະ ບັນດາແຂວງ ເອົາໃຈໃສ່ສຶກສາອົບຮົມ ວຽກງານການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນຂອງຕົນ ກ່ຽວກັບ ຄວາມຈໍາເປັນ ແລະ ຄວາມສໍາຄັນ ໃນການປັບປຸງກົງຈັກການຈັດຕັ້ງ ຄັ້ງນີ້ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

໘. ສືບຕໍ່ດໍາເນີນການປະເມີນຜົນສະມາຊິກພັກ, ພະນັກງານ-ລັດຖະກອນ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕໍາຫຼວດ ປະຈໍາແຕ່ລະປີ ເພື່ອຊອກໃຫ້ເຫັນພະນັກງານ ຜູ້ທີ່ດີ, ທີ່ເກັ່ງ, ຜູ້ທີ່ມີຄວາມຮູ້ຄວາມສາມາດ ເພື່ອເປັນບ່ອນອີງ ໃນການຈັດວາງ, ສັບຊ້ອນ ເຂົ້າໃນແຕ່ລະຕໍາແໜ່ງງານຄືນໃໝ່. ສໍາລັບ ຜູ້ທີ່ມີບັນຫາ, ເຊື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ມີການສວຍໃຊ້ໜ້າທີ່ຕໍາແໜ່ງ, ສໍ້ລາດບັງຫຼວງ ແລະ ຜູ້ທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງເດັດດ່ຽວ, ເດັດຂາດ ແກ້ໄຂບຸກຄົນເຫຼົ່ານັ້ນ ດ້ວຍມາດຕະການຕ່າງໆ ຢ່າງຂາດຕົວ;

໙. ມອບໃຫ້ລັດຖະບານ ປັບປຸງກົນໄກຄຸ້ມຄອງ ໃຫ້ເປັນລະບົບເອກະພາບ ແລະ ເຂັ້ມແຂງ; ພ້ອມນັ້ນ, ສືບຕໍ່ຜັນຂະຫຍາຍຍຸດທະສາດ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໄປພ້ອມໆກັບການແບ່ງຂອບເຂດສິດອໍານາດ, ໜ້າທີ່ ແລະ ຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ຈະແຈ້ງ, ຂາດຕົວ ຕາມທິດມອບຄວາມເປັນເຈົ້າໃຫ້ທ້ອງຖິ່ນ ຫຼາຍຂຶ້ນ ຄຽງຄູ່ກັບການຫັນພະນັກງານລົງສູ່ທ້ອງຖິ່ນ ຍົກລະດັບຄວາມສາມາດ ຂອງການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ແກ່ທ້ອງຖິ່ນ;

10. ມອບໃຫ້ລັດຖະບານ (ກະຊວງພາຍໃນ) ສົມທົບກັບຄະນະຈັດຕັ້ງສູນກາງພັກ ສັງລວມແຜນການລະອຽດ ໃນການປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນ ນໍາລາຍງານໃຫ້ກົມການເມືອງສູນກາງພັກ ເພື່ອຕົກລົງ;

11. ຄະນະພັກທຸກຂັ້ນ ຕ້ອງເປັນເຈົ້າການໃນການຄົ້ນຄວ້າ, ເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ຄໍາສັ່ງສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ; ຮັບປະກັນການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ໃນການປັບປຸງກົງຈັກການຈັດຕັ້ງ ຕິດພັນກັບການກໍານົດຕໍາແໜ່ງງານ ແລະ ຫຼຸດຜ່ອນຈໍານວນພົນ;

12. ມອບໃຫ້ອົງການເສນາທິການ ຂອງສູນກາງພັກ ແລະ ລັດຖະບານ ເປັນຜູ້ຕິດຕາມ, ຊຸກຍູ້ການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ຄໍາສັ່ງສະບັບນີ້; ຜ່ານການຈັດຕັ້ງປະຕິບັດ ຖ້າພົບບັນຫາຫຍຸ້ງຍາກ ໃຫ້ລາຍງານຂໍທິດຊີ້ນໍາ ຈາກຄະນະເລຂາທິການສູນກາງພັກ ໂດຍຜ່ານຄະນະຈັດຕັ້ງສູນກາງພັກ;

13. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ. ຄະນະເລຂາທິການສູນກາງພັກ

ຜູ້ປະຈໍາການ

ປອ ບຸນທອງ ຈິດມະນີ

ມີຈຳນວນຫຼຸດລົງ, ແຕ່ຄຸນນະພາບ ເພີ່ມຂຶ້ນ ສາມາດປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

**ຄະນະເລຂາທິການສູນກາງພັກ ອອກຄຳສັ່ງ:**

1. ໃຫ້ຄະນະພັກທຸກຂັ້ນ ຖືເອົາວຽກປັບປຸງກົງຈັກການຈັດຕັ້ງ ແລະ ວຽກກຳນົດຕຳແໜ່ງງານ ເປັນວຽກງານບຸລິມະສິດອີກວຽກໜຶ່ງ ທີ່ຂຶ້ນກັບຄວາມຮັບຜິດຊອບໂດຍກົງ ໃນການນຳພາ-ຊີ້ນຳຂອງຕົນ;
2. ໃຫ້ຄະນະພັກແຕ່ລະຂັ້ນ ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ປະຕິບັດບັນດາມະຕິ, ຄຳສັ່ງຕ່າງໆ ຂອງພັກ ແລະ ບັນດານິຕິກຳຂອງລັດ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ ແລະ ກຳນົດຕຳແໜ່ງງານ ໃຫ້ເລິກເຊິ່ງ ແລະ ທັນຕາມກຳນົດເວລາ;
3. ໃຫ້ຄະນະພັກແຕ່ລະຂັ້ນ ສະຫຼຸບ-ຕີລາຄາຄືນ ການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກ ຂອງການຈັດຕັ້ງຂັ້ນຕົນ ໃຫ້ເຫັນດ້ານດີ ທີ່ຄວນຮັກສາ, ສົ່ງເສີມ, ດ້ານອ່ອນ-ຂໍ້ຄົງຄ້າງ ທີ່ຄວນຈຳກັດແກ້ໄຂ ບົນພື້ນຖານນັ້ນ ຮີບຮ້ອນປັບປຸງພາລະບົດບາດ, ຂອບເຂດສິດ, ໜ້າທີ່ ຂອງແຕ່ລະການຈັດຕັ້ງ ໃຫ້ຈະແຈ້ງ, ຮັດກຸມ ພ້ອມທັງຄົ້ນຄວ້າກຳນົດຕຳແໜ່ງງານການຈັດຕັ້ງ ໃຫ້ສົມເຫດສົມຜົນ, ຄຽງຄູ່ກັບພິຈາລະນາ ສັບຊ້ອນ, ຈັດວາງພະນັກງານຄືນໃໝ່ ຕາມການກຳນົດຕຳແໜ່ງງານດັ່ງກ່າວ;
4. ໃຫ້ຄະນະພັກກະຊວງ-ອົງການ ຄົ້ນຄວ້າສັບຊ້ອນ ບັນດາໜ້າວຽກ ຂອງບັນດາກົມຊ່ວຍໜູນ ຂອງກະຊວງ-ອົງການ ເຂົ້າໃນພາລະບົດບາດ, ໜ້າທີ່ ຂອງທ້ອງການ; ພ້ອມນັ້ນ, ກໍໃຫ້ຄົ້ນຄວ້າຍຸບ ຫຼື ໂຮມບັນດາຫົວໜ່ວຍການຈັດຕັ້ງຂັ້ນກົມ ແລະ ຂັ້ນພະແນກ ທີ່ເຄື່ອນໄຫວບໍ່ມີປະສິດທິພາບ ຫຼື ປະສິດທິຜົນຕໍ່າ ເຂົ້າກັບຫົວໜ່ວຍການຈັດຕັ້ງ ທີ່ມີພາລະບົດບາດໃກ້ຄຽງກັນ ເພື່ອຫຼຸດຜ່ອນ ຈຳນວນກົງຈັກ ແລະ ບຸກຄະລາກອນລົງ;
5. ໃຫ້ຄະນະພັກນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເປັນເຈົ້າການຄົ້ນຄວ້າປັບປຸງກົງຈັກ ຂອງບັນດາພະແນກການ-ອົງການຕ່າງໆ ຢູ່ອ້ອມຂ້າງແຂວງ-ນະຄອນຫຼວງ, ເມືອງ-ນະຄອນ ຕາມທິດກະທັດຮັດ ຕິດພັນກັບການກຳນົດຕຳແໜ່ງງານ ແລະ ສອດຄ່ອງກັບໜ້າທີ່ວຽກງານຕົວຈິງ ແລະ ຄວາມຮຽກຮ້ອງຕ້ອງການອັນຈຳເປັນ ຂອງທ້ອງຖິ່ນ ບົນພື້ນຖານກົດໝາຍ, ລະບຽບການ ແລະ ການແບ່ງຂັ້ນຄຸ້ມຄອງ; ໃຫ້ສັບຊ້ອນບັນດາໜ້າວຽກ ຂອງກົງຈັກຊ່ວຍໜູນ ຂອງພະແນກຂັ້ນທ້ອງຖິ່ນເຂົ້າກັບຂະແໜງບໍລິຫານ ເພື່ອຫຼຸດຈຳນວນກົງຈັກ ໃຫ້ກະທັດຮັດລົງ ພ້ອມທັງຄົ້ນຄວ້າຍຸບ ຫຼື ໂຮມຫົວໜ່ວຍການຈັດຕັ້ງ ຂັ້ນຂະແໜງ ທີ່ເຄື່ອນໄຫວບໍ່ມີປະສິດທິຜົນ ຫຼື ປະສິດທິຜົນຕໍ່າ ເຂົ້າກັບຫົວໜ່ວຍການຈັດຕັ້ງ ທີ່ມີໜ້າວຽກໃກ້ຄຽງກັນ, ສ່ວນກົງຈັກ ຂອງຫ້ອງການຂັ້ນເມືອງ ກໍເຊັ່ນດຽວກັນ ໃຫ້ປັບປຸງໄປຕາມທິດກະທັດຮັດ ດັ່ງທີ່ກ່າວມາຂ້າງເທິງນັ້ນ;
6. ການປັບປຸງກົງຈັກການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ໃຫ້ຕິດພັນກັບການຄົ້ນຄວ້າປັບປຸງກົນໄກ, ແບບແຜນວິທີເຮັດວຽກ ແລະ ການພົວພັນປະສານງານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ, ການພົວພັນ ລະຫວ່າງຂະແໜງການດ້ວຍກັນ ໃຫ້ເປັນລະບົບໄລ່ງລຽນ ຫຼີກເວັ້ນການກ້າວກ່າຍ, ຊໍ້າຊ້ອນວຽກງານເຊິ່ງກັນ ແລະ ກັນ; ເດັດດ່ຽວແກ້ໄຂການມີຫຼາຍຂັ້ນ-ຂອດບໍລິຫານ ໃນວຽກງານອັນດຽວກັນ;